# ແອສ໌ທຣິກ (Astrix) ແລະ ໂອບີລິກຊ໌ (Oblix) - ກັບອານາຈັກມັງກອນ ມາຮອດໂຮງສາຍຮູບເງົາ ເມເຈີວຽງຈັນ ເຊັນເຕີ້ແລ້ວ

**ບົດຖະແຫຼງຂ່າວ**

ນັບແຕ່ວັນທີ 1 ມິຖຸນາ ຜູ້ມັກຮັກໃນຮູບເງົາຈະໄດ້ພົບກັບການພະຈົນໄພຄັ້ງໃໝ່ ຂອງສອງພະເອກໂກລົວຢູ່ໂຮງສາຍຮູບເງົາ ເມເຈີວຽງຈັນເຊັນເຕີ້. ຮູບເງົາຈະໄດ້ຖືກສາຍເປັນພາສາໄທ ຫຼື ເປັນພາສາຝຣັ່ງ ພ້ອມຄຳບັນຍາຍເປັນພາສາລາວ.

ການສາຍຮອບປະຖົມມະເລີກໄດ້ຖືກຈັດຂຶ້ນ ໃນວັນທີ 31 ພຶດສະພາ ຈັດໂດຍສະຖານທູດຝຣັ່ງ ແລະ ສະຖາບັນຝຣັ່ງ ເຊິ່ງມັນເປັນໜຶ່ງໃນບັນດາພາລະກິດຕົ້ນຕໍ ຂອງການສົ່ງເສີມວັດທະນາທຳຝຣັ່ງໃຫ້ພົ້ນເດັ່ນຢູ່ ສປປ ລາວ.

ອອກສາຍຢູ່ຝຣັ່ງ ໃນເດືອນກຸມພາ 2023 ຮູບເງົາເລື່ອງ ແອສ໌ທຣິກ (Astérix) ແລະ ໂອບີລິກຊ໌ (Obélix) - ກັບອານາຈັກມັງກອນ ໄດ້ຄອງທີ່ນັ່ງຍອດຜູ້ຊົມສູງສຸດຢ່າງໄວວາ ຂອງບອກສ໌-ອ້ອບຟິດສ໌ ຝຣັ່ງ (box-office français).

ເປັນຮູບເງົາສຳລັບເດັກນ້ອຍ ແລະ ຜູ້ໃຫຍ່ ທີ່ໄດ້ຮັບແຮງບັນດານໃຈຈາກປຶ້ມກະຕູນທີ່ມີຊື່ສຽງ ເລື່ອງການພະຈົນໄພຂອງ ແອສ໌ທຣິກ (Astérix) ແລະ ໂອບີລິກຊ໌ (Obélix). ເປັນຕົວລະຄອນໂກລົວທີ່ເກັ່ງກ້າ, ຕະຫຼົກ ແລະ ໜ້າຮັກ ຖືກສ້າງຂຶ້ນໃນປີ 1959 ໂດຍ ເຣເນ ກົດສ໌ຊີນີ (René Goscinny) ແລະ ອານແບກ ອູແດກໂຊ໌ (Albert Uderzo) ເຊິ່ງວ່າປຶ້ມຫຼົ້ມທີ 40 ຈະຖືກປ່ອຍອອກທ້າຍປີ.

ປະເພດປຶ້ມກະຕູນຢູ່ປະເທດຝຣັ່ງມີ : ມອງກາ, ກົມມິກສ໌, ກະຕູນໄວໜຸ່ມ ແລະ ກະຕູນປະເພດອື່ນໆ ທີ່ມີຍອດຂາຍຫຼາຍກວ່າ 84 ລ້ານ/ຫົວ ໃນປີ 2022 ແລະ ເປັນລາຍຮັບມູນຄ່າ 921 ລ້ານ ຢູໂລ. ໃນນັ້ນ ເປັນນັກຂຽນ-ນັກແຕ້ມກະຕູນຄົນຝຣັ່ງ ຈຳນວນຫຼາຍກວ່າ 1500 ຄົນ ທີ່ໄດ້ເລືອກເອົາສິລະປະ ອັນດັບທີ 9 (ປຶ້ມກະຕູນ) ເພື່ອສະແດງຄວາມຄິດສ້າງສັນຂອງພວກເຂົາອອກມາ.

ຍ້ອນໄດ້ຮັບຜົນສຳເລັດມາແລ້ວ ປຶ້ມກະຕູນ ແອສ໌ທຣິກ (Astérix) ມັກຖືກນຳມາຮຽບຮຽງຄືນໃໝ່ເປັນຮູບເງົາ. ອານາຈັກກາງ ເປັນຮູບເງົາ ພະຈົນໄພ ຄັ້ງທີ 5 ທີ່ມາຈາກການຮຽບຮຽງ. ຜູ້ກຳກັບການສະແດງທີ່ມີຊື່ສຽງ ກີໂຢມ ກາເນ (Guillaume Canet) ເລືອກເຮັດວຽກນຳຄົນທີ່ມີຊື່ສຽງຂອງວົງການຮູບເງົາ, ດົນຕີ ແລະແມ້ແຕ່ ວົງການກິລາ! ສລາຕັນ ອິບຣາຮິໂມວິກ Zlatan (Ibrahimovic) ອາດີດກອງໜ້າ ຂອງທີມ PSG ຮັບບົດບາດເປັນ ອອງຕີວິຣຣູສ໌ (Antivirus) ທະຫານໂຣແມງ ໂຕໃຫຍ່ລ້ຳສັນ ທີ່ບໍ່ມີໃຜສາມາດຕ້ານທານໄດ້.

ຮູບເງົາເລື່ອງ ອັດສ໌ເຕຣິກສ໌ (Astérix) ແລະ ໂອເບລິກສ໌ (Obélix)-ອານາຈັກກາງ ໄດ້ອອກສາຍເປັນທີ່ຮຽບຮ້ອຍແລ້ວຢູ່ 30 ກວ່າປະເທດ ແລະ ຍັງສ້າງໂຕເລກຜູ້ເຂົ້າຊົມໃນທົ່ວໂລກ ເປັນຈຳນວນຫຼາຍກວ່າ 4,5 ລ້ານ/ຄົນ. ເປັນເລື່ອງທີ່ເກີດຂຶ້ນໃນຍຸກ 50 ປີ ກ່ອນຄ.ສ ໄດ້ມີຈັກກະພັດດີນີແຫ່ງອານາຈັກຈີນ ຖືກຈັບໂຕຄຸມຂັງ ເນື່ອງຈາກມີການກໍ່ກະບົດຂອງເຈົ້າຊາຍ ແດງ ຊິນ ກິນ (Deng Tsin Quin). ສ່ວນວ່າ ເຈົ້າຍິງ ໄດ້ຮັບການຊ່ວຍເຫຼືອຈາກ ແກຣນເດີມາຍອິດສ໌ (Graindemaïs) ທີ່ເປັນພໍ່ຄ້າ ຄົນຊົນຊາດເຟນີເຊຍ ແລະ ຕາດຫັ້ນ (Tat Han) ທະຫານອາລັກຂາ ຜູ້ຈີງຮັກພັກດີຕໍ່ເຈົ້າຍິງ. ເຈົ້າຍິງ ຟູອີ (Fu-Yi) ເປັນທິດາ ພຽງອົງດຽວຂອງເຈົ້າຈັກກະພັດດີນີ ໄດ້ລົບໜີໄປທີ່ປະເທດໂກນ (Gaule) ເພື່ອຂໍຄວາມຊ່ວຍເຫຼືອຈາກນັກຮົບຜູ້ເກັ່ງກ້າ ມີນາມວ່າ ອັດສ໌ ເຕຣິກສ໌ (Astérix) ແລະ ໂອເບລິກສ໌ (Obélix) ທັງສອງມີກຳລັງວັງຊາເໜືອມະນຸດມະນາ ກໍ່ຍ້ອນວ່າມີນ້ຳຢາວິເສດ. ດັ່ງນັ້ນ ໂກລົວທັງສອງຈຶ່ງອອກເດີນທາງສູ່ປະເທດຈີນ ໂດຍບໍ່ຄາດຝັນວ່າ ເຊຊາກ (César) ແລະ ກອງທັບທະຫານທີ່ເຂັ້ມແຂງ ໄດ້ອອກເດີນທາງໄປຍັງອານາຈັກມັງກອນເຊັ່ນດຽວກັນ...

ຍ້ອນວ່າເປັນເລື່ອງລາວການພະຈົນໄພຂອງ ອັດສ໌ ເຕຣິກສ໌ (Astérix) ແລະ ໂອເບລິກສ໌ (Obélix), ຍ້ອນວ່າຕົວລະຄອນມີອາລົມຂົບຂັນໃຈດີ ແລະ ມີຄວາມຜູກພັນ ຈຶ່ງເຮັດໃຫ້ພວກເຮົາຄົ້ນພົບວັດທະນາທຳອື່ນໆ. ຍ້ອນເປັນຕົວລະຄອນຂອງຍຸກດຶກດຳບັນ ທີ່ຍັງຢູ່ໃນສັງຄົມຍຸກປັດຈຸບັນ ຈຶ່ງເຮັດໃຫ້ພວກເຂົາເປັນພະເອກຂອງທຸກຍຸກທຸກລຸ້ນ. ປຶ້ມກະຕູນນີ້ມີຢູ່ຫ້ອງສະໝຸດ ຂອງສະຖາບັນຝຣັ່ງ ເປັນສະຖານທີ່ເປີດຮັບທຸກຄົນ ແຕ່ອາຍຸ 3 ປີ ຈົນເຖິງ 99 ປີ.

ໃນປີ 2022 ຮູບເງົາຝຣັ່ງງດຶງດູດຜູ້ເຂົ້າຊົມໄດ້ເຖິງ 27 ລ້ານ/ຄົນ ແລະ ສ້າງລາຍໄດ້ຈາກຕ່າງປະເທດ 167,4 ລ້ານ ຢູໂຣ. ຮູບເງົາຝຣັ່ງຍັງເຂົ້າສາຍຕາມງານເທດສະການຕ່າງໆ ແລະ ສາມາດເຂົ້າຊົມທາງອິນເຕີເນັດ ໂດຍຜ່ານແພັດຟອມຕ່າງໆ. ມັນຍັງໂດດເດັ່ນໃນເລື່ອງຄວາມຫຼາກຫຼາຍຂອງຮູບເງົາທີ່ມີໃຫ້ ຕັ້ງແຕ່ຮູບເງົາຕະຫຼົກ ໄປຈົນເຖິງຮູບເງົາພະຈົນໄພ ລວມທັງຮູບເງົາແບບຈິນຕະນາການ ຫຼືວ່າ ຮູບເງົາທາງປະຫວັດສາດ. ສິລະປະ ອັນດັບທີ 7 (ຮູບເງົາ) ມັນເປັນສັນຍາລັກຂອງຄວາມຄິດສ້າງສັນ ໄດ້ຮັບການສະໜັບສະໜູນຈາກລັດຖະບານຝຣັ່ງເຊັ່ນກັນ.